ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 3744 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 31 OCT 2024

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖືຢ່າງສູງ.
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖືຢ່າງສູງ.

ເລື່ອງ: ແຈ້ງມະຕິຕົກລົງຫມຸນວຽນເປັນເອກະພາບຂອງສະພາບໍລິຫານ

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ຜ-ຟຟລ ຫຼື ບໍລິສັດ") ຂໍຖືເປັນກຽດແຈ້ງ ມະຕິຕົກລົງຫມຸນວຽນເປັນ ເອກະພາບຂອງສະພາບໍລິຫານ, ໃນວັນທີ 28 ຕຸລາ 2024, ມີລາຍລະອຽດລຸ່ມນີ້:

1. ຕົກລົງເຫັນດີເປັນເອກະພາບ ອະນຸມັດໃຫ້ ບໍລິສັດ ດຳເນີນການຈັດກອງປະຊຸມຜູ້ຖືຮຸ້ນກູ້ (Bondholder's Meeting) ທີ່ປະເທດໄທ ເພື່ອເຈລະຈາ ຂໍເພີ່ມເງື່ອນໄຂອັດຕາສ່ວນໜີ້ສິນທີ່ມີພາລະດອກເບ້ຍຕໍ່ທຶນ (Debt to Total Shareholder's Equity ຫຼື "IBD/E"(ຈາກ ບໍ່ເກີນ 2 ເທົ່າ ມາເປັນ ບໍ່ເກີນ 3 ເທົ່າ ໃນທ້າຍປີ 2024 ເປັນຕົ້ນໄປ ທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ ປີ 2018-2019 ແລະ ການອອກຈຳໜ່າຍຮຸ້ນກູ້ພາຍໃຕ້ ການນຳໃຊ້ ໂປແກຣມ MTN (Medium Term Note Program) ປີ 2021-2022 ແລະ ຕ້ອງສຳເລັດພາຍໃນ ເດືອນທັນວາ 2024.
2. ມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບຫມາຍຕໍ່ ເປັນຜູ້ມີສິດອຳນາດໃນການພິຈາລະນາ ແລະ ດຳເນີນວຽກງານ ກ່ຽວກັບການຈັດກອງປະຊຸມຜູ້ຖືຮຸ້ນກູ້ ທີ່ປະເທດໄທ ດັ່ງລາຍລະອຽດຕໍ່ໄປນີ້:
   - ຄັດເລືອກ, ເຈລະຈາ, ແຕ່ງຕັ້ງ, ຖອດຖອນ, ຕົກລົງ, ລົງນາມ ບັນດາຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາ, ການດຳເນີນການທາງດ້ານເອກະສານ, ການວ່າຈ້າງທີ່ປຶກສາການເງິນ, ການວ່າຈ້າງທີ່ປຶກສາກົດໝາຍ ແລະ/ ຫຼື ສະຖາບັນທີ່ກ່ຽວຂ້ອງອື່ນໆ ທີ່ຈຳເປັນໃນການດຳເນີນທຸລະກຳຈົນສຳເລັດ;
   - ການເປີດເຜີຍ ແລະ ການໃຫ້ຂໍ້ມູນ, ການດັດແກ້, ການເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ /ຫຼື ເອກະສານຕ່າງໆທີ່ຈຳເປັນ ແລະ ກ່ຽວຂ້ອງໃຫ້ແກ່ບັນດາໜ່ວຍງານຕ່າງໆ ແລະ/ຫຼື ອົງການຂອງລັດ, ນິຕິບຸກຄົນຫຼືບຸກຄົນໃດທີ່ກ່ຽວຂ້ອງ;
   - ປະຕິບັດ ແລະ ດຳເນີນວຽກງານອື່ນໆທີ່ຈຳເປັນ ແລະ ກ່ຽວຂ້ອງທຸກປະການເພື່ອໃຫ້ສຳເລັດທຸລະກຳດັ່ງກ່າວ ໄດ້ທັນເວລາ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ

ຮັກສາການຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວຽງ ສຸບັນທະລາດ

ຮັກສາການ ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ ຕູ້ ປ.ນ 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316141 ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la